# PRESS RELEASE

## ເປີດຕົວການປະກວດຮູບຖ່າຍເນັ້ນໜັກໃສ່ການພັດທະນາໃນປະເທດລາວ

ທີ່ນະຄອນຫຼວງວຽງຈັນທີ6 ກັນຍາ 2013ຂໍເຊີນຊວນຊ່າງພາບທົ່ວໄປພ້ອມທັງໄວໜຸ່ມທົ່ວປະເທດຮ່ວມສົ່ງຜົນງານຮູບຖ່າຍຂອງຕົນເຂົ້າຮ່ວມການປະກວດຮູບຖ່າຍສປປລາວຕໍ່ເປົ້າໝາຍສະຫັດສະວັດເພື່ອການພັດທະນາເຊິ່ງໄດ້ຖືກເປີດຕົວ ຢ່າງເປັນທາງການໃນວັນທີ 6 ກັນຍາ 2013.

ການແຂ່ງຂັນຄັ້ງນີ້ແມ່ນຖືກຈັດຂຶ້ນໂດຍການຮ່ວມມືລະຫວ່າງອົງການສະຫະປະຊາຊາດປະຈຳລາວແລະກະຊວງການຕ່າງປະເທດເພື່ອແນໃສ່ການດຶງດູດຄວາມສົນໃຈຂອງມະຫາຊົນຕໍ່ກັບວຽກງານພັດທະນາໃນສປປລາວເປັນຕົ້ນແມ່ນບັນຫາຄວາມທຸກຍາກ,ການໂພສະນາການ,ການເສຍຊີວິດຂອງແມ່ຍິງຖືພາ,ການສຶກສາ,ຄວາມສະເໝີພາບຍິງ-ຊາຍ, ສາທາລະນະສຸກ, ສິ່ງແວດລ້ອມ ແລະ ບັນຫາລະເບີດທີ່ຍັງບໍ່ທັນແຕກ (UXOs).

ຜູ້ເຂົ້າຮ່ວມສົ່ງຜົນງານແມ່ນຈະມີໂອກາດໄດ້ສະແດງຜົນງານຮູບຖ່າຍຂອງຕົວເອງເຊິ່ງສະທ້ອນເຖິງຕົ້ນເຫດ,ການແກ້ໄຂບັນຫາແລະການບັນລຸເປົ້າໝາຍໃນຂົງເຂດດ້ານການພັດທະນາຕ່າງໆ.ການປະກວດຄັ້ງນີ້ແມ່ນໄດ້ຮັບການສະໜຸນໂດຍ ບໍລິສັດ ວິມເປວຄອມລາວ ຈຳກັດ ຫຼື ບີລາຍ.

ການປະກວດຄັ້ງນີ້ຖືວ່າເປັນຄັ້ງທຳອິດໃນລາວທີ່ນຳສະເໜີເອົາສາຂາການປະກວດຮູບຖ່າຍຈາກໂທລະສັບມືຖື,ບໍ່ວ່າຈະເປັນຊ່າງພາບມືອາຊີບຫຼືຊ່າງພາບສະໝັກຫຼິ້ນທີ່ຮັກໃນການຖ່າຍພາບ,ທຸກຄົນສາມາດສົ່ງຜົນງານເຂົ້າມາຮ່ວມປະກວດໄດ້. ຜົນງານທີ່ທ່ານສົ່ງເຂົ້າມາອາດມີສິດໄດ້ຮັບລາງວັນຊະນະເລີດ ຫຼື ລາງວັນພິເສດໄດ້.

ການປະກວດດັ່ງກ່າວໄດ້ຖືກແບ່ງອອກເປັນ2ສາຂາຄື:ສາຂາຊ່າງພາບທົ່ວໄປເຊິ່ງເປີດໂອກາດໃຫ້ຄົນລາວທຸກຄົນບໍ່ຈຳກັດເພດ ແລະອາຍຸ.ສ່ວນສາຂາທີ2ແມ່ນສາຂາຊ່າງພາບໄວໜຸ່ມເປີດໂອກາດໃຫ້ສະເພາະໄວໜຸ່ມທີ່ມີອາຍຸຕ່ຳກ່ວາ25ປີແລະຮູບທີ່ຖືກຖ່າຍຈາກໂທລະສັບມືຖືເທົ່ານັ້ນ.ຜູ້ຊະນະຈາກການປະກວດໃນຫມວດຫມູ່ຊ່າງພາບທົ່ວໄປຈະຖືກຕັດສິນໂດຍຄະນະກຳມະການ.ສຳຫລັບຫມວດຫມູ່ຊ່າງພາບໄວຫນຸ່ມແມ່ນຈະຖືກລົງຄະແນນສຽງຈາກມະຫາຊົນຜ່ານທາງສື່ອອນໄລເຊັ່ນFacebook.ລາງວັນສຳລັບຜູ້ຊະນະເລີດແມ່ນຈະມີທັງກ້ອງ NIKON,Canon,ແລະ ໂທລະສັບມືຖື Samsung Galaxy S4.

ຜູ້ສະຫມັກສາມາດສົ່ງຜົນງານເຂົ້າປະກວດໂດຍບໍ່ໄດ້ເສຍຄ່າໃຊ້ຈ່າຍໃດໆ.ຫລັງຈາກເລືອກຫມວດຫມູ່ທີ່ຈະສົ່ງແລ້ວຜູ້ສະຫມັກສາມາດສົ່ງຜົນງານໄດ້ຫລາຍສຸດ3ຜົນງານ.ຜູ້ສະຫມັກຕ້ອງເປັນຄົນສັນຊາດລາວເທົ່ານັ້ນ.ຮູບຖ່າຍທີ່ສົ່ງເຂົ້າ ມາຕ້ອງມີອາຍຸບໍ່ເກີນ2ປີ ແລະຕ້ອງມີເນື້ອຫາທີ່ກ່ຽວຂ້ອງກັບເປົ້າຫມາຍສະຫັດສະວັດເພື່ອການພັດທະນາ.

ການຮັບສະໝັກແມ່ນເລີ່ມແຕ່ມື້ນີ້ເປັນຕົ້ນໄປຈົນເຖິງວັນອາທິດທີ13 ຕຸລາ 2013 ກ່ອນ 11:59ນາທີເວລາທີ່ວຽງຈັນ.
ຜູ້ຊະນະເລີດຈະຖືກປະກາດໃນວັນທີ24ຕຸລາ ໃນງານສະຫລອງວັນສະຫະປະຊາຊາດ.

ຜູ້ເຂົ້າປະກວດສາມາດເຂົ້າໄປເບິ່ງຂໍ້ມູນເພີ່ມເຕີມດ້ານເງື່ອນໄຂການປະກວດຫລືຂໍ້ມູນກ່ຽວກັບເປົ້າໝາຍສະຫັດສະວັດເພື່ອການພັດທະນາໄດ້ທີ່: www.bit.ly/laosinfocus ຫລື www.facebook.com/laosinfocus

ສົນໃຈສອບຖາມຂໍ້ມູນເພີ່ມເຕີມຕິດຕໍ່:
ທ່ານ ຄາວີ ຫອມສົມບັດ, ຫ້ອງການຜູ້ຕາງໜ້າອົງການ ສປຊ ປະຈຳສປປລາວ ໂທ: 021 267 716, 020 2987 9619, Khavi.homsombath@one.un.org